ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 109 /ປປທ
ນະຄອນຫຼວງວຽງຈັນ, ວັນທີ 16.6.2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 05 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 05 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 04 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 05/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຄົ້ນຄວາມຖີ່ວິທະຍຸສື່ສານ

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຄົ້ນຄວາມຖີ່ວິທະຍຸສື່ສານ ໃນວາລະກອງປະຊຸມ ວັນທີ 05 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຄົ້ນຄວາມຖີ່ວິທະຍຸສື່ສານ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 17 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 05 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອໃຫ້ມີປະສິດທິພາບ, ປະສິດທິຜົນ, ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ແລະ ຍຸຕິທຳ ແນໃສ່ຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ຄື້ນຄວາມຖີ່ວິທະຍຸສື່ສານ

ຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນ ຄື້ນແມ່ເຫຼັກໄຟຟ້າ ທີ່ເປັນຊັບພະຍາກອນທຳມະຊາດ ຊຶ່ງມີຢ່າງຈຳກັດ, ແຜ່ກະຈາຍໃນອາກາດ, ອາວະກາດ ແລະ ໃຕ້ນ້ຳ ນຳໃຊ້ເຂົ້າໃນວຽກງານການສື່ສານ ທີ່ມີຄື້ນຄວາມຖີ່ ແຕ່ ແປດຈຸດສາມ ກິໂລເຮີດ ເຖິງ ສາມພັນ ຈິກາເຮີດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເຮີດ (Hz–Hertz) ໝາຍເຖິງ ຫົວໜ່ວຍຂອງຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງວັດແທກຕາມຈຳນວນຮອບຄື້ນຄວາມຖີ່ວິທະຍຸສື່ສານ ຕໍ່ໜຶ່ງວິນາທີ;
2. ກິໂລເຮີດ (KHz–KiloHertz) ໝາຍເຖິງ ຫົວໜ່ວຍຂອງຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງເທົ່າກັບໜຶ່ງພັນເຮີດ;
3. ເມກາເຮີດ (MHz–MegaHertz) ໝາຍເຖິງ ຫົວໜ່ວຍຂອງຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງເທົ່າກັບໜຶ່ງລ້ານເຮີດ;
4. ຈິກາເຮີດ (GHz–GigaHertz) ໝາຍເຖິງ ຫົວໜ່ວຍຂອງຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງເທົ່າກັບໜຶ່ງພັນລ້ານເຮີດ;

5. **ຊັບພະຍາກອນໂທລະຄົມມະນາຄົມ** ໝາຍເຖິງ ຄື້ນຄວາມຖີ່, ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ, ລະຫັດຊື່ອິນເຕີເນັດ, ຕຳແໜ່ງວົງໂຄຈອນດາວທຽມ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມ;

6. **ວິທະຍຸສື່ສານ (Radio)** ໝາຍເຖິງ ການນຳໃຊ້ຄື້ນແມ່ເຫຼັກໄຟຟ້າ ເພື່ອເປັນພາຫະໃນການສື່ສານຄື້ນຄວາມຖີ່ວິທະຍຸສື່ສານທຸກປະເພດ;

7. **ແຖບຄວາມຖີ່ວິທະຍຸສື່ສານ (Radio frequency band)** ໝາຍເຖິງ ຄວາມກວ້າງຂອງຄື້ນຄວາມຖີ່ວິທະຍຸສື່ສານ ທີ່ມີຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດໃນຍ່ານຄວາມຖີ່ວິທະຍຸສື່ສານ;

8. **ຊ່ອງຄວາມຖີ່ວິທະຍຸສື່ສານ** (Radio frequency channel) ໝາຍເຖິງ ຄວາມກວ້າງຂອງຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງກຳນົດຂຶ້ນຢ່າງສອດຄ່ອງກັບເຕັກໂນໂລຊີ ແລະ ມາດຕະຖານສາກົນ ເພື່ອຮັບ, ສົ່ງສຽງ, ພາບ ແລະ ຂໍ້ມູນ ຂ່າວສານ ມີຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດທີ່ຢູ່ໃນແຖບຄວາມຖີ່ວິທະຍຸສື່ສານໃດໜຶ່ງ;

9. **ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ** ໝາຍເຖິງ ສະຖານີທີ່ມີການຕິດຕັ້ງອຸປະກອນຮັບ, ສົ່ງ ຫຼື ທັງຮັບທັງສົ່ງຄື້ນຄວາມຖີ່ວິທະຍຸສື່ສານ ເຊັ່ນ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານປະຈຳທີ່, ສະຖານີຄື້ນຄວາມຖີ່ວິທະຍຸສື່ສານເຄື່ອນທີ່;

10. **ການສື່ສານຄື້ນຄວາມຖີ່ວິທະຍຸສື່ສານ** ໝາຍເຖິງ ການຮັບ, ການສົ່ງ ຫຼື ທັງຮັບທັງສົ່ງສັນຍານ, ຂໍ້ມູນ ຂ່າວສານ, ຕົວໜັງສື, ສຽງ ແລະ ຮູບພາບດ້ວຍການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

11. **ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ** ໝາຍເຖິງ ອຸປະກອນທີ່ນຳໃຊ້ໃນການຮັບ, ການສົ່ງ ຫຼື ທັງຮັບທັງສົ່ງສັນຍານ, ຂໍ້ມູນ ຂ່າວສານ, ຕົວໜັງສື, ສຽງ ແລະ ຮູບພາບ ດ້ວຍການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ລວມທັງລະບົບເຄື່ອງບິນບໍ່ມີຄົນຂັບ (Unmanned Aircraft System UAS);

12. **ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໄລຍະໃກ້** ໝາຍເຖິງ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານທີ່ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ ສຳລັບອຸປະກອນກະຈາຍຄື້ນຄວາມຖີ່ວິທະຍຸສື່ສານໄລຍະໃກ້ສະເພາະ ແລະ ມີການກຳນົດຄວາມກວ້າງຂອງຊ່ອງຄວາມຖີ່, ໄລຍະຫ່າງຂອງຊ່ອງຄວາມຖີ່, ຄວາມແຮງກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຕາມມາດຕະຖານສາກົນ ເປັນຕົ້ນ ໄມໂຄຣໂຟນແບບບໍ່ມີສາຍ, ຣີໂມດຄວບຄຸມ, ອຸປະກອນວາຍຟາຍ;

13. **ຄື້ນຄວາມຖີ່ວິທະຍຸສື່ສານລົບກວນ** ໝາຍເຖິງ ຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ ທີ່ມາຈາກຄື້ນຄວາມຖີ່ວິທະຍຸສື່ສານຄືກັນ ຫຼື ຄື້ນຄວາມຖີ່ວິທະຍຸສື່ສານແປກປອມ ຊຶ່ງສົ່ງຜົນກະທົບຕໍ່ຄຸນນະພາບຂອງສັນຍານ ເຮັດໃຫ້ຮັບຂໍ້ມູນຜິດພາດ, ສູນເສຍຂໍ້ມູນ, ຂັດຂວາງ ຫຼື ລົບກວນການທຳງານ ແລະ ເປັນອັນຕະລາຍຕໍ່ວຽກງານສື່ສານການນຳທາງ, ວຽກງານສື່ສານຄວາມປອດໄພ ແລະ ວຽກງານສື່ສານອື່ນ;

14. **ສະຖານີຄື້ນຄວາມຖີ່ວິທະຍຸສື່ສານທາງບົກ** ໝາຍເຖິງ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ມີການເຄື່ອນທີ່ ຊຶ່ງນຳໃຊ້ເຂົ້າໃນການສື່ສານເຄື່ອນທີ່.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ

ລັດ ເປັນຜູ້ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ ຢ່າງລວມສູນໃນຂອບເຂດທົ່ວປະເທດ ແລະ ມີສິດພຽງຜູ້ດຽວໃນການອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້.

ລັດ ສົ່ງເສີມໃຫ້ທຸກພາກສ່ວນຂອງລັດ ແລະ ເອກະຊົນທີ່ມີເງື່ອນໄຂຄົບຖ້ວນ ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ, ວັດທະນະທຳສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານແຈ້ງເຕືອນໄພ ແລະ ບັນເທົາໄພພິບັດຕ່າງໆ, ວຽກງານຄົ້ນຄວ້າວິໄຈທາງວິທະຍາສາດ ຢ່າງມີປະສິດທິພາບ, ປະສິດທິຜົນ, ປອດໄພ ແລະ ຍຸຕິທຳ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ວຽກງານຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ ດ້ວຍການປະກອບບຸກຄະລາກອນ, ການພັດທະນາຊັບພະຍາກອນມະນຸດ, ງົບປະມານ, ພື້ນຖານໂຄງລ່າງ ແລະ ອຸປະກອນທີ່ຈໍາເປັນຕາມຄວາມສາມາດໃນແຕ່ລະໄລຍະ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານດ້ວຍຫຼາຍຮູບແບບທີ່ນໍາໃຊ້ເຕັກໂນໂລຊີໃໝ່ ແລະ ກ້າວໜ້າ ເພື່ອໃຫ້ເກີດປະໂຫຍດສູງສຸດຕໍ່ສັງຄົມ ແລະ ປະເທດຊາດ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ**

ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ເປັນເອກະພາບທົ່ວປະເທດ;
3. ຮັບປະກັນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ;
4. ຮັບປະກັນໃຫ້ມີຄວາມຍຸຕິທໍາ, ປະສິດທິພາບ, ປະສິດທິຜົນ, ນໍາໃຊ້ຖືກເປົ້າໝາຍ ແລະ ບໍ່ໃຫ້ມີການລົບກວນ ຊຶ່ງກັນ ແລະ ກັນ;
5. ຮັບປະກັນດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
6. ຮັບປະກັນຄວາມສອດຄ່ອງກັບ ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ດ້ວຍການແລກປ່ຽນ ບົດຮຽນດ້ານຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ມີການພັດທະນາ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ແຜນຍຸດທະສາດ, ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 8 ແຜນຍຸດທະສາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ**

ລັດຖະບານ ເປັນຜູ້ສ້າງແຜນຍຸດທະສາດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໂດຍໃຫ້ສອດຄ່ອງກັບແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລ້ວສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 9 ແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ**

ແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນ ແຜນຜັງການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ ເປັນຍ່ານຄວາມຖີ່ວິທະຍຸສື່ສານ ແລະ ເປັນແຖບຄວາມຖີ່ວິທະຍຸສື່ສານ ທີ່ມີການກຳນົດການນຳໃຊ້.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ສ້າງ ແລະ ປັບປຸງແຜນຜັງແຫ່ງຊາດ ໂດຍສອດຄ່ອງກັບແຜນຍຸດທະສາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ໃນແຕ່ລະໄລຍະ ແລະ ສະເໜີລັດຖະບານພິຈາລະນາຮັບຮອງ.

**ມາດຕາ 10 ການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ**

ຄື້ນຄວາມຖີ່ວິທະຍຸສື່ສານ ຖືກຈັດສັນເປັນແຖບໄວ້ໃນແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອກຳນົດເປົ້າໝາຍການນຳໃຊ້ໃຫ້ແກ່ ໜຶ່ງ ຫຼື ຫຼາຍ ວຽກງານສື່ສານ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຈັດສັນ, ຈັດແບ່ງ, ອະນຸຍາດ, ຖອນ, ຕິດຕາມກວດກາ, ເກັບຄືນ ແລະ ສະຫງວນໄວ້ ຄື້ນຄວາມຖີ່ວິທະຍຸສື່ສານທັງໝົດຢູ່ ສປປ ລາວ ໂດຍສອດຄ່ອງກັບກົດໝາຍສະບັບນີ້, ລະບຽບການອື່ນທີ່ກ່ຽວຂ້ອງ, ແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ, ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 11 ການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານສຳລັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຈັດສັນຄື້ນຄວາມຖີ່ວິທະຍຸສື່ສານສຳລັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃນກໍລະນີມີເຫດສຸກເສີນ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ສາມາດນຳໃຊ້ຊ່ອງຄວາມຖີ່ວິທະຍຸສື່ສານໃດໜຶ່ງເປັນການຊົ່ວຄາວ ນອກຈາກທີ່ໄດ້ຈັດສັນໃຫ້ ແຕ່ຕ້ອງແຈ້ງໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຊາບ.

**ມາດຕາ 12 ການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ ສຳລັບສະຖານທູດ, ສະຖານກົງສູນ, ສຳນັກງານອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ**

ການຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ ສຳລັບສະຖານທູດ, ສະຖານກົງສູນ, ສຳນັກງານອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ເຄື່ອນໄຫວຢູ່ ສປປ ລາວ ໃຫ້ປະຕິບັດຕາມແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແລະ ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 13 ຍ່ານຄວາມຖີ່ວິທະຍຸສື່ສານ**

ຍ່ານຄວາມຖີ່ວິທະຍຸສື່ສານ (Radio frequency range) ແມ່ນ ຂອບເຂດສະເພາະຂອງຄື້ນຄວາມຖີ່ວິທະຍຸສື່ສານ ທີ່ມີຫຼາຍແຖບຄວາມຖີ່ວິທະຍຸສື່ສານ.

ຄື້ນຄວາມຖີ່ວິທະຍຸສື່ສານ ມີ ເກົ້າ ຍ່ານ ຊຶ່ງນຳໃຊ້ເລີ່ມແຕ່ຍ່ານຄວາມຖີ່ວິທະຍຸສື່ສານທີ ສີ່ ຂຶ້ນໄປ ຕາມທີ່ສາກົນຮັບຮອງ ດັ່ງນີ້:

1. ຍ່ານຄວາມຖີ່ວິທະຍຸສື່ສານທີ ສີ່ (VLF-Very Low Frequency);
2. ຍ່ານຄວາມຖີ່ວິທະຍຸສື່ສານທີ ຫ້າ (LF-Low Frequency);
3. ຍ່ານຄວາມຖີ່ວິທະຍຸສື່ສານທີ ຫົກ (MF-Medium Frequency);
4. ຍ່ານຄວາມຖີ່ວິທະຍຸສື່ສານທີ ເຈັດ (HF-High Frequency);
5. ຍ່ານຄວາມຖີ່ວິທະຍຸສື່ສານທີ ແປດ (VHF-Very High Frequency);
6. ຍ່ານຄວາມຖີ່ວິທະຍຸສື່ສານທີ ເກົ້າ (UHF-Ultra High Frequency);
7. ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບ (SHF-Super High Frequency);
8. ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບເອັດ (EHF-Extremely High Frequency);
9. ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບສອງ (THF-Tremendously High Frequency).

ຍ່ານຄວາມຖີ່ວິທະຍຸສື່ສານ ອາດປ່ຽນແປງຕາມການປັບປຸງແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແຕ່ລະໄລຍະ.

**ມາດຕາ 14 ຍ່ານຄວາມຖີ່ວິທະຍຸສື່ສານທີ ສີ່**

ຍ່ານຄວາມຖີ່ວິທະຍຸສື່ສານທີ ສີ່ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ແປດຈຸດສາມ ກິໂລເຮີດ ເຖິງ ສາມສິບ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ຮ້ອຍ ກິໂລແມັດ ເຖິງ ສິບ ກິໂລແມັດ ທີ່ນຳໃຊ້ສຳລັບວຽກງານສື່ສານ ເປັນຕົ້ນ ລະບົບໂທລະເລກທາງທະເລ, ການສື່ສານໃຕ້ນ້ຳ.

**ມາດຕາ 15 ຍ່ານຄວາມຖີ່ວິທະຍຸສື່ສານທີ ຫ້າ**

ຍ່ານຄວາມຖີ່ວິທະຍຸສື່ສານທີ ຫ້າ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານສູງກວ່າ ສາມສິບ ກິໂລເຮີດ ເຖິງ ສາມຮ້ອຍ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສິບ ກິໂລແມັດ ເຖິງ ໜຶ່ງ ກິໂລແມັດ ທີ່ນຳໃຊ້ສຳລັບວຽກງານສື່ສານ ເປັນຕົ້ນ ວິທະຍຸກະຈາຍສຽງລະບົບເອເອັມ, ວຽກງານສື່ສານນຳທາງທາງທະເລ ແລະ ວຽກງານສື່ສານເຄື່ອນທີ່ທາງການບິນ.

**ມາດຕາ 16 ຍ່ານຄວາມຖີ່ວິທະຍຸສື່ສານທີ ຫົກ**

ຍ່ານຄວາມຖີ່ວິທະຍຸສື່ສານທີ ຫົກ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມຮ້ອຍ ກິໂລເຮີດ ເຖິງ ສາມພັນ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ໜຶ່ງ ກິໂລແມັດ ເຖິງ ຮ້ອຍ ແມັດ ທີ່ນຳໃຊ້ສຳລັບວຽກງານສື່ສານ ເປັນຕົ້ນ ວຽກງານສື່ສານນຳທາງທາງທະເລ, ວຽກງານສື່ສານເຄື່ອນທີ່ທາງທະເລ, ວຽກງານສື່ສານເຄື່ອນທີ່ທາງການບິນ, ວຽກງານສື່ສານສະໝັກຫຼິ້ນ, ວິທະຍຸກະຈາຍສຽງລະບົບເອເອັມ.

ມາດຕາ 17 ຍ່ານຄວາມຖີ່ວິທະຍຸສື່ສານທີ ເຈັດ

ຍ່ານຄວາມຖີ່ວິທະຍຸສື່ສານທີ ເຈັດ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມ ເມກາເຮີດ ເຖິງ ສາມສິບ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ຮ້ອຍ ແມັດ ເຖິງ ສິບ ແມັດ ທີ່ນໍາໃຊ້ສໍາລັບວຽກງານສື່ສານ ເປັນຕົ້ນ ການສື່ສານທາງໄກລະບົບຄື້ນສັ້ນ, ວຽກງານສື່ສານສະໝັກຫຼິ້ນ ແລະ ວຽກງານສື່ສານເຄື່ອນທີ່ທາງການບິນ.

ມາດຕາ 18 ຍ່ານຄວາມຖີ່ວິທະຍຸສື່ສານທີ ແປດ

ຍ່ານຄວາມຖີ່ວິທະຍຸສື່ສານທີ ແປດ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມສິບ ເມກາເຮີດ ເຖິງ ສາມຮ້ອຍ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສິບ ແມັດ ເຖິງ ໜຶ່ງ ແມັດ ທີ່ນໍາໃຊ້ສໍາລັບການສື່ສານ ເປັນຕົ້ນ ວຽກງານສື່ສານສະໝັກຫຼິ້ນ, ໂທລະພາບ, ວຽກງານສື່ສານເຄື່ອນທີ່ທາງການບິນ, ວຽກງານສື່ສານເຄື່ອນທີ່ທາງບົກ ແລະ ວິທະຍຸກະຈາຍສຽງລະບົບເອັຟເອັມ.

ມາດຕາ 19 ຍ່ານຄວາມຖີ່ວິທະຍຸສື່ສານທີ ເກົ້າ

ຍ່ານຄວາມຖີ່ວິທະຍຸສື່ສານທີ ເກົ້າ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມຮ້ອຍ ເມກາເຮີດ ເຖິງ ສາມພັນ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ໜຶ່ງ ແມັດ ເຖິງ ຮ້ອຍ ມິລິແມັດ ທີ່ນໍາໃຊ້ສໍາລັບການສື່ສານ ເປັນຕົ້ນ ລະບົບໂທລະສັບເຄື່ອນທີ່, ໂທລະພາບ, ວຽກງານສື່ສານສໍາຫຼວດໂລກຜ່ານດາວທຽມ ແລະ ວຽກງານສື່ສານສະໝັກຫຼິ້ນ.

ມາດຕາ 20 ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບ

ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມ ຈິກາເຮີດ ເຖິງ ສາມສິບ ຈິກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ຮ້ອຍ ມິລິແມັດ ເຖິງ ສິບ ມິລິແມັດ ທີ່ນໍາໃຊ້ສໍາລັບການສື່ສານ ເປັນຕົ້ນ ການສື່ສານຜ່ານດາວທຽມ, ລະບົບໄມໂຄຣເວບ, ລະບົບຣາດາ, ວຽກງານສື່ສານດາຣາສາດ, ວຽກງານສື່ສານສໍາຫຼວດໂລກຜ່ານດາວທຽມ ແລະ ວຽກງານສື່ສານອຸຕຸນິຍົມວິທະຍາ.

ມາດຕາ 21 ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບເອັດ

ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບເອັດ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມສິບ ຈິກາເຮີດ ເຖິງ ສາມ ຮ້ອຍ ຈິກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສິບ ມິລິແມັດ ເຖິງ ໜຶ່ງ ມິລິແມັດ ທີ່ນໍາໃຊ້ສໍາລັບການສື່ສານ ເປັນຕົ້ນ ລະບົບໄມໂຄຣເວບ, ວຽກງານສື່ສານດາຣາສາດ, ວຽກງານສື່ສານສໍາຫຼວດໂລກຜ່ານດາວທຽມ, ວຽກງານສື່ສານສໍາຫຼວດ ແລະ ຄົ້ນຫາຕໍາແໜ່ງ ແລະ ວຽກງານສື່ສານ ເພື່ອຄວາມປອດໄພ.

ມາດຕາ 22 ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບສອງ

ຍ່ານຄວາມຖີ່ວິທະຍຸສື່ສານທີ ສິບສອງ ແມ່ນ ຄື້ນຄວາມຖີ່ວິທະຍຸສື່ສານແຕ່ ສາມຮ້ອຍ ຈິກາເຮີດ ເຖິງ ສາມພັນ ຈິກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ວິທະຍຸສື່ສານແຕ່ ໜຶ່ງ ມິລິແມັດ ເຖິງ ຮ້ອຍ ໄມໂຄຣແມັດ ຕາມການຮັບຮອງຂອງສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 3
## ການສື່ສານຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 23 ປະເພດການສື່ສານ**

ປະເພດການສື່ສານຕົ້ນຕໍ ມີ ດັ່ງນີ້:

1. ການສື່ສານຄົງທີ່;
2. ການສື່ສານເຄື່ອນທີ່;
3. ວິທະຍຸກະຈາຍສຽງ ແລະ ໂທລະພາບ;
4. ການສື່ສານຜ່ານດາວທຽມ;
5. ການສື່ສານສຳຫຼວດ ແລະ ຄົ້ນຫາຕຳແໜ່ງ.

**ມາດຕາ 24 ການສື່ສານຄົງທີ່**

ການສື່ສານຄົງທີ່ ແມ່ນ ການສື່ສານລະຫວ່າງ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງເປັນສະຖານີຄື້ນຄວາມຖີ່ວິທະຍຸສື່ສານຄົງທີ່ ເປັນຕົ້ນ ລະບົບໄມໂຄຣເວບ, ການສື່ສານທາງໄກລະບົບຄື້ນສັ້ນ.

**ມາດຕາ 25 ການສື່ສານເຄື່ອນທີ່**

ການສື່ສານເຄື່ອນທີ່ ແມ່ນ ການສື່ສານລະຫວ່າງ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານເຄື່ອນທີ່ ແລະ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານທາງບົກ ຫຼື ລະຫວ່າງສະຖານີຄື້ນຄວາມຖີ່ວິທະຍຸສື່ສານເຄື່ອນທີ່ດ້ວຍກັນ ເປັນຕົ້ນ ລະບົບໂທລະສັບເຄື່ອນທີ່, ລະບົບໂຟນີ, ວຽກງານສື່ສານເຄື່ອນທີ່ທາງການບິນ, ວຽກງານສື່ສານເຄື່ອນທີ່ທາງທະເລ.

**ມາດຕາ 26 ວິທະຍຸກະຈາຍສຽງ ແລະ ໂທລະພາບ**

ວິທະຍຸກະຈາຍສຽງ ແລະ ໂທລະພາບ ແມ່ນ ການສົ່ງສັນຍານສຽງ, ພາບ ໂດຍນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອໃຫ້ປະຊາຊົນສາມາດຮັບຟັງ, ຮັບຊົມໄດ້ໂດຍກົງ ເປັນຕົ້ນ ວິທະຍຸກະຈາຍສຽງລະບົບຄື້ນສັ້ນ, ວິທະຍຸກະຈາຍສຽງລະບົບເອເອັມ, ວິທະຍຸກະຈາຍສຽງລະບົບເອັຟເອັມ, ໂທລະພາບລະບົບອານາລັອກ ແລະ ໂທລະພາບລະບົບດິຈິຕອນ.

**ມາດຕາ 27 ການສື່ສານຜ່ານດາວທຽມ**

ການສື່ສານຜ່ານດາວທຽມ ແມ່ນ ເຕັກໂນໂລຊີການສື່ສານທີ່ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອຮັບ, ສົ່ງສັນຍານ ສຽງ, ພາບ ແລະ ຂໍ້ມູນ ຂ່າວສານ ລະຫວ່າງ ໜຶ່ງ ຫຼື ຫຼາຍສະຖານີພາກພື້ນດິນ ແລະ ໜ່ວຍດາວທຽມ ເປັນຕົ້ນ ວິທະຍຸກະຈາຍສຽງ ແລະ ໂທລະພາບຜ່ານດາວທຽມ, ວຽກງານສື່ສານສຳຫຼວດ ແລະ ຄົ້ນຫາຕຳແໜ່ງຜ່ານດາວທຽມ, ວຽກງານສື່ສານເຄື່ອນທີ່ຜ່ານດາວທຽມ ແລະ ການສື່ສານຄົງທີ່ຜ່ານດາວທຽມທຸກລະບົບ.

**ມາດຕາ 28 ການສື່ສານສຳຫຼວດ ແລະ ຄົ້ນຫາຕຳແໜ່ງ**

ການສື່ສານສຳຫຼວດ ແລະ ຄົ້ນຫາຕຳແໜ່ງ ແມ່ນ ເຕັກໂນໂລຊີການສື່ສານທີ່ສົ່ງ ຫຼື ຮັບຂໍ້ມູນ ກ່ຽວກັບຕຳແໜ່ງ ຄວາມໄວ ແລະ ຄຸນລັກສະນະອື່ນຂອງເປົ້າໝາຍ ເປັນຕົ້ນ ວຽກງານສື່ສານນຳທາງ ທາງການບິນ, ລະບົບຈີພີເອສ ແລະ ວຽກງານສື່ສານນຳທາງ ທາງທະເລ.

## ໝວດທີ 4
## ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 29 ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງຂໍອະນຸຍາດຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້.

ສຳລັບວຽກງານສຸກເສີນ, ໄພພິບັດ, ຊ່ວຍເຫຼືອສັງຄົມ ແລະ ວຽກງານສະເພາະຂອງລັດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຕາມແຕ່ລະກໍລະນີ.

**ມາດຕາ 30 ການນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໄລຍະໃກ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໄລຍະໃກ້ ບໍ່ຈຳເປັນຕ້ອງຂໍອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 31 ເງື່ອນໄຂການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມເງື່ອນໄຂ ດັ່ງນີ້:

1. ມີທະບຽນວິສາຫະກິດ ສຳລັບຜູ້ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອດຳເນີນທຸລະກິດໃດໜຶ່ງ;
2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ;
3. ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;
4. ມີແຜນນຳໃຊ້, ພັດທະນາ ແລະ ແຜນການດຳເນີນກິດຈະການຂອງຕົນ;
5. ຮັບປະກັນມາດຕະຖານເຕັກນິກ;
6. ເງື່ອນໄຂອື່ນ ຕາມແຕ່ລະປະເພດການສື່ສານ.

**ມາດຕາ 32 ການຍື່ນຄຳຮ້ອງຂໍນຳໃຊ້**

ຜູ້ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງຍື່ນຄຳຮ້ອງຕໍ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ເອກະສານປະກອບ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມສຳລັບຕາມແຕ່ລະປະເພດການສື່ສານ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ແຜນພັດທະນາເຄືອຂ່າຍ ແລະ ແຜນການດຳເນີນກິດຈະການຂອງຕົນ;

3. ບົດວິພາກເສດຖະກິດເຕັກນິກ ສຳລັບທຸລະກິດການໃຫ້ບໍລິການ ເປັນຕົ້ນ ການໂທລະຄົມມະນາຄົມ, ວິທະຍຸກະຈາຍສຽງ ແລະ ໂທລະພາບ;

4. ສຳເນົາຂໍ້ຕົກລົງ ຫຼື ໜັງສືຢັ້ງຢືນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ສຳລັບອົງການຈັດຕັ້ງ;

5. ສຳເນົາທະບຽນວິສາຫະກິດ ແລະ ທະບຽນອາກອນ ທີ່ຖືກຕ້ອງຕາມກົດໝາຍ ສຳລັບວິສາຫະກິດ.

### ມາດຕາ 33 ການພິຈາລະນາຄຳຮ້ອງຂໍນຳໃຊ້

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາການຂໍອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ພາຍໃນເວລາ ຊາວຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ເມື່ອເຫັນວ່າເອກະສານຖືກຕ້ອງ, ຄົບຖ້ວນ ແລະ ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ແລ້ວ, ໃນກໍລະນີຫາກເຫັນວ່າເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບ ພາຍໃນເວລາ ຫ້າວັນ ລັດຖະການ.

ໃນກໍລະນີບໍ່ອະນຸຍາດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບພາຍໃນເວລາ ຫ້າວັນ ລັດຖະການ.

### ມາດຕາ 34 ອາຍຸຂອງໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີອາຍຸສູງສຸດ ໜຶ່ງ ປີ ແລະ ສາມາດຕໍ່ໄດ້.

ສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ສາມາດຕໍ່ໄດ້ຕາມອາຍຸຂອງໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ.

ສຳລັບວຽກງານສຸກເສີນ, ໄພພິບັດຕ່າງໆ, ຊ່ວຍເຫຼືອສັງຄົມ ແລະ ວຽກງານສະເພາະຂອງລັດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ທີ່ມີອາຍຸຕ່ຳກວ່າ ໜຶ່ງ ປີ ຕາມແຕ່ລະກໍລະນີ.

### ມາດຕາ 35 ການຕໍ່ອາຍຸ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ສາມາດຂໍຕໍ່ອາຍຸການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ພາຍໃນເວລາ ຫົກສິບວັນ ກ່ອນວັນໝົດອາຍຸນຳໃຊ້.

ການຂໍຕໍ່ອາຍຸດັ່ງກ່າວ ຈະໄດ້ຮັບການພິຈາລະນາ ກໍຕໍ່ເມື່ອຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໄດ້ປະຕິບັດ ດັ່ງນີ້:

1. ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
2. ປະຕິບັດພັນທະ, ເສຍຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ.

### ມາດຕາ 36 ການໂຈະໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຈະຖືກໂຈະໃບອະນຸຍາດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;
2. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ບໍ່ສອດຄ່ອງກັບມາດຕະຖານເຕັກນິກ ແລະ ກົດໝາຍ.

**ມາດຕາ 37 ການຖອນໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຈະຖືກຖອນໃບອະນຸຍາດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ນຳໃຊ້ບໍ່ຖືກຕ້ອງຕາມຈຸດປະສົງຂອງໃບອະນຸຍາດ;
2. ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;
3. ບໍ່ປະຕິບັດພັນທະ, ບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການຢ່າງຄົບຖ້ວນ;
4. ລະເມີດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອອກແຈ້ງການ ຖອນໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນ ກ່ຽວກັບການຖອນໃບອະນຸຍາດນຳໃຊ້ດັ່ງກ່າວ.

**ມາດຕາ 38 ການປະມູນຄື້ນຄວາມຖີ່ວິທະຍຸສື່ສານ**

ຄື້ນຄວາມຖີ່ວິທະຍຸສື່ສານ ທີ່ສ້າງລາຍຮັບສູງ, ຕະຫຼາດມີຄວາມຕ້ອງການຫຼາຍແຕ່ມີຈຳກັດ ຕ້ອງມີການປະມູນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5
## ຄ່ານຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 39 ຄ່ານຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງເສຍຄ່ານຳໃຊ້ຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 40 ການຍົກເວັ້ນຄ່ານຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານສຸກເສີນ, ວຽກງານແຈ້ງເຕືອນໄພ ແລະ ບັນເທົາໄພພິບັດຕ່າງໆແກ່ສາທາລະນະຊົນ, ວຽກງານຂອງລັດກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຍັງຕົກຄ້າງຢູ່ ສປປ ລາວ, ວຽກງານສຳຄັນລະດັບຊາດ ຕາມການຕົກລົງຂອງລັດຖະບານ, ສະຖານທູດ ແລະ ອົງການຈັດຕັ້ງສາກົນ ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໄດ້ຮັບການຍົກເວັ້ນຄ່ານຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 41 ສິດຂອງຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີ ສິດ ດັ່ງນີ້:

1. ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

2. ນຳເຂົ້າ ແລະ ຕິດຕັ້ງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ຕາມການອະນຸຍາດຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3. ຂາຍ, ໂອນ ແລະ ໃຫ້ເຊົ່າສິດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມການອະນຸຍາດຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

4. ໄດ້ຮັບການຕໍ່ອາຍຸນຳໃຊ້ ຫຼື ຍົກເລີກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້;

5. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ພັນທະຂອງຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີ ພັນທະ ດັ່ງນີ້:

1. ລາຍງານ ຫຼື ແຈ້ງຕໍ່ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນກໍລະນີມີຄື້ນຄວາມຖີ່ວິທະຍຸສື່ສານ ລົບກວນ ຫຼື ມີການປ່ຽນແປງຄື້ນຄວາມຖີ່ວິທະຍຸສື່ສານ;

2. ຮັບປະກັນການນຳໃຊ້ໃຫ້ມີຄວາມປອດໄພຕໍ່ສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມ ຕາມມາດຕະຖານສາກົນ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຮັບປະກັນການນຳໃຊ້ໃຫ້ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ບໍ່ລົບກວນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ;

4. ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃຫ້ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອຊອກຫາທີ່ມາຂອງຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ແລະ ແກ້ໄຂໃຫ້ທັນເວລາ;

5. ປະຕິບັດກົດໝາຍກ່ຽວກັບການບັນຊີ, ການເງິນ, ສະຖິຕິ ແລະ ລະບອບລາຍງານ;

6. ເສຍພັນທະ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 7
## ການນຳເຂົ້າອຸປະກອນ ແລະ ຄວາມປອດໄພຂອງການກະຈາຍ ຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 43 ການນຳເຂົ້າອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳເຂົ້າອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານທຸກຊະນິດ ຕ້ອງຂໍອະນຸຍາດນຳຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນຄຸນນະພາບ ແລະ ມາດຕະຖານທາງດ້ານເຕັກ ນິກ.

ບັນຊີອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ການຄຸ້ມຄອງການນຳເຂົ້າ ແລະ ການນຳໃຊ້ອຸປະກອນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 44 ຄວາມປອດໄພຂອງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ, ກວດກາ ແລະ ຢັ້ງຢືນມາດຕະຖານຄວາມປອດໄພຂອງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຂອງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ, ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ທີ່ຕັ້ງຢູ່ດິນແດນ ຂອງ ສປປ ລາວ ຕາມມາດຕະຖານສາກົນ.

## ໝວດທີ 8
## ການຕິດຕາມກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການຫຼຸດຜ່ອນຄື້ນຄວາມຖີ່ວິທະຍຸສື່ສານລົບກວນ

**ມາດຕາ 45 ການຕິດຕາມກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕິດຕາມກວດກາ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານຢູ່ພາຍໃນປະເທດ ລວມທັງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຂອງຕ່າງປະເທດ ທີ່ລ່ວງລ້ຳເຂົ້າມາໃນດິນແດນຂອງ ສປປ ລາວ.

**ມາດຕາ 46 ການຄວບຄຸມການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ເພື່ອຮັບປະກັນຄວາມປອດໄພຂອງສາທາລະນະ ແລະ ຄວາມໝັ້ນຄົງຂອງຊາດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະສານສົມທົບກັບ ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດຳເນີນການ ດັ່ງນີ້:

1. ຄວບຄຸມສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ໄລຍະຊົ່ວຄາວ;
2. ກວດກາການສື່ສານຂອງບຸກຄົນໃດໜຶ່ງທີ່ຖືກສົງໄສວ່າມີການກໍ່ກວນຄວາມສະຫງົບ ຫຼື ຄວາມປອດໄພຂອງສັງຄົມ;
3. ຄວບຄຸມ ແລະ ຍຶດອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານຂອງຜູ້ນຳໃຊ້ທີ່ພົວພັນກັບການກໍ່ກວນຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມ ເພື່ອດຳເນີນຄະດີຕາມກົດໝາຍ.

**ມາດຕາ 47 ການຫຼຸດຜ່ອນຄື້ນຄວາມຖີ່ວິທະຍຸສື່ສານລົບກວນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂທີ່ກຳນົດໄວ້ໃນໃບອະນຸຍາດ ແລະ ຕ້ອງນຳໃຊ້ມາດຕະການຫຼຸດຜ່ອນຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຮັກສາກຳລັງສົ່ງຂອງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ຢູ່ໃນລະດັບຕາມການອະນຸຍາດ;
2. ຫຼຸດຜ່ອນລະດັບການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ອາດພາໃຫ້ເກີດຄື້ນຄວາມຖີ່ວິທະຍຸສື່ສານລົບກວນ;
3. ດັດປັບທິດທາງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ;
4. ດັດປັບຄວາມສູງຂອງສາຍອາກາດ;

5. ຕິດຕັ້ງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ຢູ່ຫ່າງກັນໃນລະດັບທີ່ເໝາະສົມ ໃນກໍລະນີນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານດຽວກັນ;

6. ຈັດສັນເວລາກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຄືນໃໝ່;

7. ນໍາໃຊ້ມາດຕະການອື່ນ.

**ມາດຕາ 48 ການແກ້ໄຂບັນຫາກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານລົບກວນ**

ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການຊອກຫາທີ່ມາຂອງຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ແລະ ແກ້ໄຂ ຕາມການສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເມື່ອມີບັນຫາຄື້ນຄວາມຖີ່ວິທະຍຸສື່ສານລົບກວນສະຖານີຄື້ນຄວາມຖີ່ວິທະຍຸສື່ສານຂອງຕົນ.

ໃນການແກ້ໄຂບັນຫາຄື້ນຄວາມຖີ່ວິທະຍຸລົບກວນ ໃຫ້ປະຕິບັດ ດັ່ງນີ້:

1. ສະຖານີຄື້ນຄວາມຖີ່ວິທະຍຸສື່ສານທີ່ກໍ່ໃຫ້ເກີດການລົບກວນ ຕ້ອງໃຫ້ການຮ່ວມມືກັບເຈົ້າໜ້າທີ່ຕິດຕາມກວດກາຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອແກ້ໄຂໃຫ້ທັນເວລາ;

2. ສະຖານີຄື້ນຄວາມຖີ່ວິທະຍຸສື່ສານທີ່ຕິດຕັ້ງກ່ອນ ມີບູລິມະສິດ;

3. ຜູ້ທີ່ກໍ່ໃຫ້ເກີດຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍໃຫ້ແກ່ຜູ້ນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ ທີ່ໄດ້ຮັບຄວາມເສຍຫາຍ.

**ມາດຕາ 49 ການແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນຂອງຕ່າງປະເທດ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາຄື້ນຄວາມຖີ່ວິທະຍຸສື່ສານລົບກວນຂອງຕ່າງປະເທດ ໂດຍປະຕິບັດຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໂດຍບໍ່ໄດ້ຮັບອະນຸຍາດ;

2. ນໍາເຂົ້າ, ຜະລິດ, ຕິດຕັ້ງ ແລະ ຈໍາໜ່າຍ ອຸປະກອນກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານເຂົ້າໃນການກໍ່ກວນຄວາມສະຫງົບ;

4. ສ້າງຄວາມເສຍຫາຍໃຫ້ແກ່ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ, ອຸປະກອນກວດກາ ແລະ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;

5. ຂັດຂວາງການຕິດຕັ້ງອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການປະຕິບັດວຽກງານຂອງເຈົ້າໜ້າທີ່ກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 ຂໍ້ຫ້າມສຳລັບພະນັກງານຄື້ນຄວາມຖີ່ວິທະຍຸສື່ສານ**

ຫ້າມພະນັກງານຄື້ນຄວາມຖີ່ວິທະຍຸສື່ສານ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງຊາດ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ລັດ, ລວມໝູ່, ບຸກຄົນ ແລະ ການຈັດຕັ້ງ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;

4. ດຳລົງຕຳແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາ ໃຫ້ຫົວໜ່ວຍທຸລະກິດ ນຳເຂົ້າ, ຈຳໜ່າຍ, ສ້ອມແປງອຸປະກອນ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

5. ດຳເນີນທຸລະກິດກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 52 ຂໍ້ຫ້າມສຳລັບຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ຫ້າມຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານບໍ່ຖືກຕ້ອງ ຕາມເງື່ອນໄຂມາດຕະຖານເຕັກນິກທີ່ໄດ້ຮັບອະນຸຍາດ;

2. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານລົບກວນ, ສ້າງຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

3. ຂາຍ, ໂອນ ແລະ ໃຫ້ເຊົ່າສິດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

4. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານເຂົ້າໃນຈຸດປະສົງອື່ນ ທີ່ບໍ່ຖືກຕ້ອງຕາມການອະນຸຍາດ;

5. ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານເກີນມາດຕະຖານຄວາມປອດໄພ ທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 10
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 53 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມໂດຍຄູ່ກໍລະນີ;

2. ການໄກ່ເກ່ຍ;

3. ການແກ້ໄຂທາງດ້ານບໍລິຫານ;

4. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ການຮ້ອງຟ້ອງຕໍ່ສານປະຊາຊົນ;

6. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

ມາດຕາ 54 ການປະນີປະນອມໂດຍຄູ່ກໍລະນີ

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດປຶກສາຫາລື ແລະ ປະນີປະນອມນໍາກັນ ເພື່ອແກ້ໄຂຂໍ້ຂັດແຍ່ງນັ້ນ.

ມາດຕາ 55 ການໄກ່ເກ່ຍ

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ.

ມາດຕາ 56 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນ ຫຼື ບໍ່ສາມາດແກ້ໄຂດ້ວຍການການປະນີປະນອມກັນໄດ້ ຄູ່ກໍລະນີມີສິດສະເໜີໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາແກ້ໄຂ.

ມາດຕາ 57 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດໍາເນີນກິດຈະການທີ່ມີການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຄູ່ກໍລະນີມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂຕາມກົດໝາຍ.

ມາດຕາ 58 ການຮ້ອງຟ້ອງຕໍ່ສານປະຊາຊົນ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດໍາເນີນກິດຈະການທີ່ມີການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງມີສິດຮ້ອງຟ້ອງ ຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

ມາດຕາ 59 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ທີ່ມີລັກສະນະສາກົນ ແມ່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 11
## ການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ

ມາດຕາ 60 ອົງການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ

ລັດຖະບານ ຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ປະກອບດ້ວຍ:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ;

3. ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງໃຫ້ທົ່ວປວງຊົນ;

4. ຈັດແບ່ງຄວາມຮັບຜິດຊອບກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານໃຫ້ ແຂວງ, ນະຄອນຫຼວງ;

5. ຊີ້ນຳການຈັດຕັ້ງປະຕິບັດວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຕໍ່ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

6. ອະນຸຍາດນຳເຂົ້າອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ ຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ;

8. ປົກປ້ອງສິດ, ຜົນປະໂຫຍດຂອງ ສປປ ລາວ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ວົງໂຄຈອນດາວທຽມ;

9. ຄຸ້ມຄອງ, ບໍລິຫານ, ຈັດສັນ, ຈັດແບ່ງ ແລະ ຖອນ ຫຼື ເກັບຄືນຄື້ນຄວາມຖີ່ວິທະຍຸສື່ສານ;

10. ຈັດການປະມູນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

11. ອະນຸຍາດ, ຕໍ່ອາຍຸ, ຍົກເລີກ ຫຼື ຖອນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

12. ປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຮ່ວມມືວຽກງານຄື້ນຄວາມຖີ່ວິທະຍຸສື່ສານກັບປະເທດທີ່ມີຊາຍແດນຕິດກັບ ສປປ ລາວ;

13. ຄຸ້ມຄອງ, ຕິດຕາມກວດກາ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃນຂອບເຂດທົ່ວປະເທດ;

14. ແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

15. ກ່າວເຕືອນ ແລະ ນຳໃຊ້ມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້;

16. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

17. ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານວິຊາການດ້ານຄື້ນຄວາມຖີ່ວິທະຍຸສື່ສານ;

18. ພົວພັນ ແລະ ຮ່ວມມືກັບສາກົນໃນວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ຕາມການມອບໝາຍຂອງລັດຖະບານ;

19. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ຕໍ່ລັດຖະບານ ຢ່າງປົກກະຕິ;

20. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ໂຄສະນາ ເຜີຍແຜ່ກົດໝາຍສະບັບນີ້ ຢູ່ພາຍໃນທ້ອງຖິ່ນຂອງຕົນໃຫ້ທົ່ວເຖິງ;

3. ຊີ້ນຳຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເມືອງ, ເທດສະບານ, ນະຄອນ ກ່ຽວກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ;

4. ແບ່ງຄວາມຮັບຜິດຊອບ ກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານໃຫ້ ເມືອງ, ເທດສະບານ, ນະຄອນ;

5. ອະນຸຍາດ, ຕໍ່ອາຍຸ, ຍົກເລີກ ຫຼື ຖອນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມການແບ່ງຂັ້ນຄຸ້ມຄອງ;

6. ອະນຸຍາດນຳເຂົ້າອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ຕາມການແບ່ງຂັ້ນຄຸ້ມຄອງ;

7. ຄຸ້ມຄອງ, ຕິດຕາມ, ກວດກາ ການນຳເຂົ້າ ແລະ ການນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;

8. ແກ້ໄຂຄຳສະເໜີ ທີ່ເກີດຈາກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

9. ກ່າວເຕືອນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້;

10. ເກັບກຳຂໍ້ມູນສະຖິຕິຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

11. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມລະບຽບການ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ຕໍ່ອົງການປົກຄອງ ແຂວງ, ນະຄອນຫຼວງ ແລະ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ປະສານສົມທົບກັບອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຕິດຕາມການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

3. ເກັບກຳຂໍ້ມູນສະຖິຕິຂອງຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

4. ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄົ້ນຄວ້າມຖີ່ວິທະຍຸສື່ສານ ຕໍ່ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

6. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ຂອງພາກສ່ວນອື່ນ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ມີ ສິດ ແລະ ໜ້າທີ່ ໃນການໃຫ້ຄວາມຮ່ວມມື ແລະ ປະສານສົມທົບກັບຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 12
## ການກວດກາວຽກງານຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 65 ອົງການກວດກາວຽກງານຄື້ນຄວາມຖີ່ວິທະຍຸສື່ສານ**

ອົງການກວດກາວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ປະກອບດ້ວຍ:

1. ອົງການກວດກາພາຍໃນ;
2. ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ຊຶ່ງມີສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 66 ເນື້ອໃນການກວດກາ**

ການກວດກາວຽກງານຄື້ນຄວາມຖີ່ວິທະຍຸສື່ສານມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານຄື້ນຄວາມຖີ່ວິທະຍຸສື່ສານ;
3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 67 ຮູບການກວດກາ**

ການກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ທີ່ຈະຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບ.

ການກວດກາ ໃຫ້ດຳເນີນທັງກວດກາເອກະສານ ແລະ ກວດກາການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ແລະ ໃຫ້ປະຕິບັດກົດໝາຍຢ່າງເຂັ້ມງວດ.

### ມາດຕາ 68 ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ

ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນ ພະນັກງານ-ລັດຖະກອນທີ່ສັງກັດຢູ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ໃນການຕິດຕາມກວດກາການນຳໃຊ້, ການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຢູ່ສູນກາງ, ທ້ອງຖິ່ນ ແລະ ວຽກງານສະເພາະກິດໃດໜຶ່ງ.

ພະນັກງານກວດກາຄື້ນຄວາມຖີ່ວິທະຍຸ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາວັດແທກຄຸນລັກສະນະທາງດ້ານເຕັກນິກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຂອງແຕ່ລະສະຖານີຄື້ນຄວາມຖີ່ວິທະຍຸສື່ສານໃຫ້ມີຄຸນນະພາບ;
2. ຊອກຫາທີ່ມາຂອງຄື້ນຄວາມຖີ່ວິທະຍຸສື່ສານໃນທຸກວຽກງານສື່ສານ;
3. ຫາວິທີແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ;
4. ກວດກາສະຖານີຄື້ນຄວາມຖີ່ວິທະຍຸສື່ສານໂດຍກົງ, ໃນກໍລະນີພົບຄວາມຫຍຸ້ງຍາກໃນການກວດກາ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
5. ກ່າວເຕືອນໃນກໍລະນີກວດພົບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານບໍ່ຖືກຕ້ອງ, ເຮັດບົດບັນທຶກການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ພ້ອມທັງລາຍງານພາກສ່ວນທີ່ກ່ຽວຂ້ອງຢ່າງທັນການ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

## ໝວດທີ 13
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 69 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຖືກຕ້ອງ ຕາມຈຸດປະສົງເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 70 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ ລວມທັງໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

### ມາດຕາ 71 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຄັ້ງທຳອິດ ທີ່ບໍ່ເປັນອັນຕະລາຍ ຫຼື ຮ້າຍແຮງ ໂດຍບໍ່ເຈດຕະນາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ.

### ມາດຕາ 72 ມາດຕະການທາງວິໄນ

ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 73 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝໃນກໍລະນີ ດັ່ງນີ້:

1. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໂດຍບໍ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂໍ້ 1 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ຄື:

- ສຳລັບສະຖານີຄື້ນຄວາມຖີ່ວິທະຍຸສື່ສານອື່ນ ຈະຖືກປັບໃໝ 50.000 ກີບ ຄູນໃຫ້ຄວາມກວ້າງຂອງຄື້ນຄວາມຖີ່ວິທະຍຸສື່ສານທີ່ນຳໃຊ້ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
- ສຳລັບສະຖານີວິທະຍຸກະຈາຍສຽງ ຈະຖືກປັບໃໝ 3.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
- ສຳລັບສະຖານີໂທລະພາບ ຈະຖືກປັບໃໝ 12.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
- ສຳລັບສະຖານີຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຈະຖືກປັບໃໝ 18.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ.

2. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານບໍ່ຖືກຕ້ອງຕາມເງື່ອນໄຂທີ່ກຳນົດໃນໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂໍ້ 1 ແລະ 4 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ຄື:

- ສຳລັບສະຖານີອື່ນ ຈະຖືກປັບໃໝ 25.000 ກີບ ຄູນໃຫ້ຄວາມກວ້າງຂອງຄື້ນຄວາມຖີ່ວິທະຍຸສື່ສານທີ່ນຳໃຊ້ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ.
- ສຳລັບສະຖານີວິທະຍຸກະຈາຍສຽງ ຈະຖືກປັບໃໝ 1.500.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
- ສຳລັບສະຖານີໂທລະພາບ ຈະຖືກປັບໃໝ 6.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
- ສຳລັບສະຖານີຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຈະຖືກປັບໃໝ 9.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ.

3. ລະເມີດມາດຕະການຄວາມປອດໄພຂອງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂໍ້ 5 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ຄື:

- ສໍາລັບສະຖານີຄື້ນຄວາມຖີ່ວິທະຍຸສື່ສານອື່ນ ຈະຖືກປັບໃໝ 50.000 ກີບ ຄູນໃຫ້ຄວາມກວ້າງຂອງຄື້ນຄວາມຖີ່ວິທະຍຸສື່ສານທີ່ນໍາໃຊ້ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ.

- ສໍາລັບສະຖານີວິທະຍຸກະຈາຍສຽງ ຈະຖືກປັບໃໝ 3.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;

- ສໍາລັບສະຖານີໂທລະພາບ ຈະຖືກປັບໃໝ 12.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;

- ສໍາລັບສະຖານີຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຈະຖືກປັບໃໝ 18.000.000 ກີບ ຕໍ່ 1 ຊ່ອງຄວາມຖີ່ວິທະຍຸສື່ສານ ຕໍ່ 1 ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 74 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ລັດ, ລວມໝູ່ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 75 ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 14
## ບົດບັນຍັດສຸດທ້າຍ

**ມາດຕາ 76 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 77 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້